ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY

ບົດລາຍງານປະຈຳປີ 2021

ສາມຈາກຜູ້ອຳນວຍການໃຫ່ຍ

ເຖິງ: ທ່ານຜູ້ຖືຮຸ້ນ ທີ່ນັບຖື ແລະ ຮັກແພງ

ໃນສົກປີ 2021 ທີ່ຜ່ານມາ ດັ່ງທີ່ທຸກຄົນໄດ້ຮັບຮູ້ແລ້ວວ່າ ເສດຖະກິດໂດຍລວມທັງໝົດຂອງ ສປປ ລາວ ແລະ ໃນ ໂລກແມ່ນໄດ້ຮັບຜົນກະທົບຢ່າງຫຼວງຫລາຍ ຈາກການລະບາດຂອງໂລກພະຍາດ ໂຄວິດ2019 (Covid -19) ທີ່ມີຜົນ ກະທົບໄປທົ່ວໂລກ, ຊຶ່ງບໍລິສັດຂອງພວກເຮົາກໍ່ເປັນບໍລິສັດໜຶ່ງທີ ໄດ້ຮັບຜົນກະທົບ ຫຼາຍສົມຄວນ ຈາກການລອກດາວ ເຮັດໃຫ້ການຂົນສົ່ງ ຜົນຜະລິດມີຄວາມຫຍຸ້ງຍາກ ແລະ ຊັກຊ້າ ຊຶ່ງກໍ່ໃຫ້ເກີດຜົນຜະລິດ ມີການເນົ່າເສຍ. ຈາກສະພາບ ການຄວາມຫຍຸ້ງຍາກດັ່ງກ່າວນີ້ ເຮັດໃຫ້ພວກເຮົາບໍ່ສາມາດເຮັດບັນລຸຕາມແຜນທີ່ວາງໄວ້ໃນປີ 2021. ສຳລັບປີ 2022 ພວກເຮົາເຊື່ອວ່າຄວາມທຸມເທພະຍາຍາມຂອງ ພວກເຮົາພ້ອມດ້ວຍພະນັກງານທຸກຄົນ ຈະສາມາດ ບັນລຸຕາມເປົ້າໝາຍທີ ວາງໄວ້ໄດ້ຢ່າງແນ່ນອນ ແລະ ອີກຢ່າງຄວາມຕ້ອງການສິນຄ້າຜົນຜະລິດປາມນ້ຳມັນ ໃນ ສປປ ລາວ ມີຄວາມຕ້ອງການ ເພີ້ມຂຶ້ນຢ່າງຫລວງຫຼາຍ.

1. ບໍລິສັດ ລາວອາໂກຣເທັກ ມະຫາຊົນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ("**ບໍລິສັດ**" ຫຼື "**ລອທ**") ໄດ້ສ້າງຕັ້ງຂຶ້ນໃນວັນທີ 29 ກໍລະກົດ 2008, ອີງຕາມໃບອະນຸຍາດລົງທຶນພາຍໃນ ສະບັບເລກທີ 077/ຄລທ.ນວ ໃນຮູບແບບບໍລິສັດ ຈຳກັດຜູ້ດຽວ ໂດຍມີນັກທຸລະກິດຄົນລາວຖືຮຸ້ນ 100 ສ່ວນຮ້ອຍ ດ້ວຍທຶນຈົດທະບຽນ 100,000 (ໜຶ່ງແສນ) ໂດລາສະຫະລັດ, ດຳເນີນທຸລະກິດໃຫ້ບໍລິການທີ່ປຶກສາດ້ານກະສິກຳແບບຄົບວົງຈອນຊຶ່ງຄອບຄຸມນັບຕັ້ງແຕ່ການສ້າງຟາມ, ການກ້າເບ້ຍ ແລະ ການປູກ.

ວັນທີ 04 ພຶດສະພາ 2012 ບໍລິສັດໄດ້ເພີ່ມທຶນຈົດທະບຽນມາເປັນ 5,000,000,000 (ຫ້າຕື້) ກີບ ໂດຍໄດ້ຮັບອະນຸຍາດດຳເນີນທຸລະກິດເພີ່ມເຕີມຄື: ປະເພດອຸດສະຫະກຳປຸງແຕ່ງຜະລິດນ້ຳມັນປາມຄົບວົງຈອນ ເປັນຕົ້ນແມ່ນການສ້າງໂຮງງານແປຮູບຜົນຜະລິດຈາກຕົ້ນປາມນ້ຳມັນ, ໂຮງງານຝຸ່ນຊີວະພາບ, ໂຮງງານຜະລິດນ້ຳມັນກະຊວນຊີວະພາບ, ໂຮງງານອັດຮ່າຍນ້ຳມັນພືດ ອີງຕາມໃບທະບຽນວິສາຫະກິດ ສະບັບເລກທີ 0932/ຈທວ.

ວັນທີ 28 ສິງຫາ 2013 ບໍລິສັດໄດ້ມີການເພີ່ມທຶນຈົດທະບຽນມາເປັນ 40,000,000,000 (ສີ່ສິບຕື້) ກີບ ແລະ ຫັນປ່ຽນຮູບແບບບໍລິສັດຈາກບໍລິສັດຈຳກັດຜູ້ດຽວມາເປັນຮູບແບບບໍລິສັດຈຳກັດ, ເຊິ່ງໄດ້ຮັບອະນຸຍາດດຳເນີນທຸລະກິດເພີ່ມເຕີມຄື: ນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍແນວພັນພືດ,ເບ້ຍໄມ້ກະສິກຳ ແລະ ຜົນຜະລິດກະສິກຳທຸກຊະນິດ, ນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍສະບຽງອາຫານ ແລະ ເຄື່ອງດື່ມ,ນຳເຂົ້າວັດສະດຸກໍ່ສ້າງກຽວກັບການສ້າງຕັ້ງໂຮງງານອຸດສະຫະກຳ ແລະ ກະສິກຳ, ເຄື່ອງຈັກອື່ນໆທີ່ກ່ຽວຂ້ອງກັບ Biodiesel ເພື່ອຮັບໃຊ້ໂຮງງານ, ຝຸ່ນເຄມີ ແລະ ຫົວເຊື້ອເພື່ອນຳໃຊ້ເປັນສ່ວນປະກອບຜະລິດຝຸ່ນຊີວະພາບ. ໃນໄລຍະດັ່ງກ່າວ, ທຸລະກິດປາມເລີ່ມເປັນທີ່ຮັບຮູ້ ແລະ ມີການຕອບຮັບເປັນຢ່າງດີ ໃນໂຄງການປູກປາມຂອງບໍລິສັດທີ່ສົ່ງເສີມປະຊາຊົນ ຊຶ່ງມີເນື້ອທີ່ປູກສອນປາມກ່ວາ 120 (ໜຶ່ງຮ້ອຍຊາວ) ເຮັກຕ້າ ທີ່ບ້ານແອກຊ້າງ, ເມືອງໂພນໂຮງ, ແຂວງວຽງຈັນ.

ວັນທີ 12 ພະຈິກ 2014 ບໍລິສັດໄດ້ມີການປ່ຽນແປງສັດສ່ວນການຖືຮຸ້ນໃໝ່ ໂດຍທີ່ມີການຖືຄອງຮຸ້ນຈາກນັກທຸລະກິດລາວຄື: ທ່ານ ບຸນມາ ຈັນທະວົງ ຈຳນວນ 10 (ສິບ) ສ່ວນຮ້ອຍ, ທ່ານ ອຸດົມ ແກ້ວທະວົງ ຈຳນວນ 5 (ຫ້າ) ສ່ວນຮ້ອຍ ແລະ ນັກທຸລະກິດໄທ: ທ່ານ ເສດ ພັດທະນາມາດ ຈຳນວນ 85 (ແປດສິບຫ້າ) ສ່ວນຮ້ອຍ. ໃນໄລຍະນີ້ ບໍລິສັດໄດ້ມີໂຄງການ 2+3 ປູກປາມນ້ຳມັນ ທີ່ເມືອງໄຊຍະບູລີ ແລະ ໄດ້ພັດທະນາຕົ້ນປາມສາຍພັນທີ່ເໝາະສົມກັບພື້ນທີ່ ສປປ ລາວ ເປັນຊຸດທີ່ສອງ.

ບໍລິສັດໄດ້ຫັນປ່ຽນຮູບແບບເປັນ ບໍລິສັດ ມະຫາຊົນ, ໂດຍບໍລິສັດໄດ້ຮັບການ ສ້າງຕັ້ງຂຶ້ນໃນວັນທີ 17 ພຶດສະພາ ປີ 2017 ອີງຕາມໃບທະບຽນວິສາຫະກິດ ສະບັບເລກທີ 0424/ຈທວ ພາຍໃຕ້ກົດໝາຍ ຂອງ ສປປ ລາວ (ເຊິ່ງຕໍ່ໄປນີ້ເອີ້ນວ່າ "**ວັນທີປ່ຽນຮູບແບບບໍລິສັດ**) ໂດຍມີ ສຳນັກງານໃຫຍ່ຕັ້ງຢູ່: ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ,ສປປ ລາວ. ໃນວັນທີປ່ຽນຮູບແບບ ບໍລິສັດ ມີທຶນຈົດທະບຽນຢູ່ທີ່ 40,000,000,000 ກີບ (ສີ່ສິບຕື້) ກີບ ບໍລິສັດໄດ້ຮັບອະນຸຍາດຈາກກະຊວງອຸດສາຫະກຳ ແລະ ການຄ້າສາມາດດຳເນີນທຸລະກິດໃນການນຳເຂົ້າຫົວເຊື້ອນ້ຳມັນເຊື້ອໄຟ ແລະ ບໍລິການຂາຍຍົກ-ຂາຍຍ່ອຍ ນ້ຳມັນເຊື້ອໄຟຊີວະພາບ ແລະ ໃຫ້ນຳເຂົ້ານ້ຳມັນກາຊວນເທົ່ານັ້ນ ເພື່ອມາຜະລິດເປັນ ນ້ຳມັນເຊື້ອໄຟຊີວະພາບ.

ເວົ້າລວມແລ້ວ, ບໍລິສັດລາວອາໂກຣເທັກແມ່ນບໍລິສັດທີ່ດຳເນີນທຸລະກິດທາງດ້ານອຸດສາຫະກຳການກະເສດແປຮູບແບບຄົບວົງຈອນ ໂດຍສຸມໃສ່ພືດທີ່ໃຫ້ນ້ຳມັນ ເຊິ່ງສາມາດແປຮູບໃຫ້ເປັນອາຫານ ແລະ ພະລັງງານໄດ້. ພືດນ້ຳມັນທີ່ບໍລິສັດໄດ້ພັດທະນາໃຫ້ເປັນທຸລະກິດຫຼັກໄດ້ແກ່: ນ້ຳມັນປາມ ທຸລະກິດກ່ຽວພັນກັບປາມນ້ຳມັນທີ່ສາມາດສ້າງລາຍຮັບໃຫ້ກັບບໍລິສັດປະກອບມີ:

- ທຸລະກິດຜະລິດ ແລະ ຈຳໜ່າຍເມັດພັນປາມ ແລະ ຕົ້ນກ້າປາມ.
- ທຸລະກິດໃຫ້ການບໍລິການປູກ, ດູແລ, ແລະ ເປັນທີ່ປຶກສາໃນການບໍລິຫານຈັດການສວນປາມ.
- ທຸລະກິດຜະລິດ ແລະ ຈຳໜ່າຍນ້ຳມັນປາມດິບ.
- ທຸລະກິດຜະລິດ ແລະ ຈຳໜ່າຍນ້ຳມັນກາຊວນຊີວະພາບ.
- ທຸລະກິດນຳເຂົ້າສິນຄ້າສຳເລັດຮູບເພື່ອຈຳໜ່າຍ.

2. ວິໄສທັດ

ເປັນຜູ້ນຳດ້ານອຸດສາຫະກຳປາມນ້ຳມັນຄົບວົງຈອນໃນ ສ ປປ ລາວ ເພື່ອ ຜະລິດເປັນພະລັງງານ ແລະ ອາຫານແບບ ຍືນຍົງ.

3. ພາລະກິດ

- ສະໜອງແນວພັນປາມນ້ຳມັນທີ່ດີ ມີຄຸນນະພາບ ໃຫ້ກັບກະເສດຕະກອນ.
- ສົ່ງເສີມໃຫ້ປະຊາຊົນທີ່ມີສ່ວນຮ່ວມໃນການປູກປາມນ້ຳມັນເພື່ອໃຫ້ມີລາຍໄດ້ທີ່ໝັ້ນຄົງ.
- ຜະລິດນ້ຳມັນປາມດິບໃຫ້ມີຄຸນນະພາບ ເພື່ອສະໜອງໃຫ້ພຽງພໍກັບລູກຄ້າ.
- ຜະລິດ ແລະ ສົ່ງເສີມການນຳໃຊ້ນ້ຳມັນເຊື້ອໄຟຊີວະພາບທີ່ເປັນພະລັງທົດແທນ.
- ຮັກສາຜົນປະໂຫຍດຕໍ່ຜູ້ຖືຮຸ້ນ ທີ່ມີສ່ວນໄດ້ສ່ວນເສຍ ໃຫ້ໄດ້ຮັບຜົນຕອບແທນສູງສຸດ.

4. ຜົນການດຳເນີນທຸລະກິດ

❖ ລາຍຮັບປະຈຳປີ

ຜະລິດຕະພັນ	ແຜນປະຈຳປີ 2021		ຜະລິດຕະພັນ	ຍອດຂາຍປີ 2021	
	(ລ້ານກີບ)	(%)		(ລ້ານກີບ)	(%)
ນ້ຳມັນກາຊວນ B5	30,000.00	56.60	ນ້ຳມັນກາຊວນ B5	3,054.58	16.71
ນ້ຳມັນ CPO	12,000.00	22.64	ນ້ຳມັນ CPO	13,159.28	72
ນ້ຳມັນ Cooking Oil	5,000.00	9.43	ນ້ຳມັນ Cooking Oil	2.84	0.02
ຕົ້ນກ້າ	1,500.00	2.83	ຕົ້ນກ້າ	87.88	0.48
ປຸ໋ຍ	1,000.00	1.89	ປຸ໋ຍ	414.87	2.27
ແປ້ງນິວ	2,000.00	3.77	ແປ້ງນິວ	724.24	3.96
ກາກປາມ	1,500.00	2.83	ລາຍຮັບອື່ນ(ກາກປາມ)	834.21	4.56
ລວມ	**53,000.00**	**100.00**	**ລວມ**	**18,277.92**	**100.00**

- **ລາຍຮັບ.**

  ບໍລິສັດມີລາຍຮັບໃນປີ 2021 ທັງໝົດ 18,277.92 ລ້ານກີບ, ເມືອທຽບໃສ່ແຜນແມ່ນສາມາດປະຕິບັດໄດ້ 34,48 ສ່ວນຮ້ອຍ. ໃນນັ້ນລາຍຮັບສ່ວນໃຫຍ່ແມ່ນມາຈາກການຈຳໜ່າຍ ນ້ຳມັນປາມດິບ (CPO) ກວມເອົາ 72,00% ຂອງລາຍຮັບທັງໝົດ.

- **ກຳໄລ-ຂາດທຶນ.**

  ໃນປີ 2021 ບໍລິສັດຂາດທຶນຈາກການດຳເນີນທຸລະກິດ ຈຳນວນ 2,849.21 ລ້ານກີບ

- **ຊັບສິນ.**


  ວັນທີ 31 ທັນວາ 2020 ບໍລິສັດມີຊັບສິນລວມເທົ່າກັບ 64,190.19 ລ້ານກີບ ແລະ ໃນປີ 2021 ເທົ່າກັບ 59,235.63 ລ້ານກີບ ເຊິ່ງຫຼຸດລົງຈາກປີ 2020 ໃນອັດຕາເທົ່າກັບ 7.72 ສ່ວນຮ້ອຍ

- **ໜີ້ສິນ.**

  ບໍລິສັດມີໜີ້ສິນລວມ ໃນປີ 2021 ເທົ່າກັບ 5,131.67 ລ້ານກີບ ເມືອທຽບໃສ່ປີ 2020 ມີໜີ້ສິນເທົ່າກັບ 7,237.01 ລ້ານກີບ ແມ່ນຫຼຸດລົງ 29.09 ສ່ວນຮ້ອຍ ເຊິ່ງໜີ້ສິນດັ່ງກ່າວແມ່ນມາຈາກການເງິນກູ້ຍືມ ທີ່ໄດ້ນຳໃຊ້ເຂົ້າໃນການດຳເນີນທຸລະກິດຂອງບໍລິສັດ.

5. ໂຄງຮ່າງການຈັດຕັ້ງ ແລະ ບໍລິຫານ

ໂຄງຮ່າງການຈັດຕັ້ງຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ ປະກອບມີ:



- ❖ ສະພາບໍລິຫານ ມີສະມາຊິກຈຳນວນ 6 ທ່ານ (ສະມາຊິກອິດສະຫຼະ 2 ທ່ານ)
- ❖ ມີພະນັກງານຂອງ ລອທ ທັງໝົດ 45 ຄົນ, ໃນນີ້ຍິງ 13 ຄົນ
  - ສຳນັກງານໃຫຍ່ ຈຳນວນ 6 ຄົນ
  - ສວນໝອງຄັນຄູ ຈຳນວນ 26 ຄົນ
  - ສວນແກ້ວອຸດົມ ຈຳນວນ 9 ຄົນ
  - ສວນຊະນະຄາມ ຈຳນວນ 2 ຄົນ
  - ສວນສາລະວັນ ຈຳນວນ 2 ຄົນ


ສະພາບໍລິຫານ

ລຳດັບ	ຮູບຖ່າຍ	ສະພາບໍລິຫານ (Board of Directors)	ຕຳແໜ່ງ
1		ທ່ານ ອະພິສິດ ຮຸຈິກຽດກຳຈອນ	ປະທານ (ສະມາຊິກອິດສະລະ)
2		ທ່ານ ນາງ ຄຳແພງ ພັດທະດາວົງ	ຮອງປະທານ (ສະມາຊິກອິດສະລະ)
3		ທ່ານ ເສດ ພັດທະນະມາດ	ສະມາຊິກ
4		ທ່ານ ອຸດົມ ແກ້ວທະວົງ	ສະມາຊິກ / ຜູ້ອຳນວຍການໃຫຍ່
5		ທ່ານ ດວງສະໄໝ ເລົ່າຝົງ	ສະມາຊິກ (ສະມາຊິກອິດສະລະ)
6		ທ່ານ ພົງຖານ ພິດຈຳນົງ	ສະມາຊິກ

6. ແຜນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2022.

ບໍລິສັດໄດ້ວາງແຜນກຳນົດຍອດຂາຍໃນປີ 2022 ດັ່ງນີ້:

ປະເພດ	ຍອດຂາຍປີ 2022	
	(ລ້ານກີບ)	(%)
ນ້ຳມັນກາຊອນ B5	15,000.00	42.86
ນ້ຳມັນ CPO	14,000.00	40.00
ຕົ້ນກ້າ	1,250.00	3.57
ປຸ໋ຍ	1,000.00	2.86
ແປ້ງນົວ	1,750.00	5.00
ກາກປາມ	2,000.00	5.71
ລວມ	**35,000.00**	**100.00**



- ສະໜອງນ້ຳມັນປາມດິບ ໃຫ້ພຽງພໍກັບຄວາມຕ້ອງການຂອງລູກຄ້າ.
- ສະໜອງປຸ໋ຍນາ ແລະ ປຸ໋ຍປາມນ້ຳມັນໃຫ້ ທົ່ວເຖິງສະມາຊິກສວນປາມ.
- ສືບຕໍ່ສົ່ງເສີມການປູກປາມຮ່ວມກັບປະຊາຊົນໃນຮູບແບບ 2+3.
- ຈັດຫານຳເຂົ້າສິນຄ້າອຸປະໂພກ-ບໍລິໂພກ ເພື່ອຈຳໜ່າຍ.
- ສືບຕໍ່ ປະສານງານກັບຫນ່ວຍງານລັດ ເພື່ອເຮັດໂຄງສ້າງລາຄາຈຳໜ່າຍນ້ຳມັນເຊື້ອໄຟຊີວະພາບ ແລະ ມາດຕະຖານ ນ້ຳມັນຊີວະພາບ.
- ສືບຕໍ່ດຳເນີນການເອກະສານ ຂໍສຳປະທານດິນລັດ ຈຳນວນ 4,040 ເຮັກຕາ.